ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ຄົມມະນາຄົມ ຂົນສົ່ງ

ໄປສະນີ ແລະ ກໍ່ສ້າງ                                                                 ເລກທີ      /ຄຂປກ

**ຂໍ້ກຳນົດ**

**ກ່ຽວກັບ ການອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ**

**ສຳຫຼວດ-ອອກແບບ ເຄຫາສະຖານ**

- ອີງຕາມກົດໝາຍ ວ່າດ້ວຍທຸລະກິດ ສະບັບເລກທີ 03 194/ສພຊ, ລົງວັນທີ 18/07/94;
- ອີງຕາມກົດໝາຍ ວ່າດ້ວຍການສົ່ງເສີມ ການລົງທຶນພາຍໃນ, ສະບັບເລກທີ 03 / 95, ລົງວັນທີ 8/03/95;
- ອີງຕາມກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕ່າງປະເທດ ຢູ່ ສປປ ລາວ, ສະບັບເລກທີ 01/94, ລົງວັນທີ 4 / 03 194;
- ອີງຕາມດຳລັດ ນາຍົກລັດຖະມົນຕີ, ສະບັບເລກທີ 66 / ນຍ, ລົງວັນທີ 20/05/99 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

**ລັດຖະມົນຕີກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກຂໍ້ກຳນົດ:**

## ໝວດທີ I

## ຂໍ້ກຳນົດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ກຳນົດສະບັບນີ້ ວາງລະບຽບການ ສຳລັບການອະນຸຍາດ ສ້າງຕັ້ງ ແລະ ດຳເນີນທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ, ຕະຫຼອດຮອດ ການຄຸ້ມຄອງ ແລະ ສົ່ງເສີມ ໃຫ້ບັນດາຫົວໜ່ວຍ ທຸລະກິດດັ່ງກ່າວ ໄດ້ມີການເຄື່ອນໄຫວສອດຄ່ອງກັບ ແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ແລະ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2: ທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ**

ທຸລະກິດສຳຫຼວດ-ອອກແບບ ເຄຫາສະຖານ ແມ່ນທຸລະກິດບໍລິການ ຊຶ່ງປະກອບມີ: ການສຳຫຼວດ-ວິໄຈດິນ ແລະ ວັດສະດຸກໍ່ສ້າງ, ອອກແບບສະຖາປັດຕິຍະກຳ ແລະ ໂຄງສ້າງ, ອອກແບບຕົບແຕ່ງ ພາຍໃນ-ພາຍນອກ, ຄຸ້ມຄອງ ແລະ ກວດກາການກໍ່ສ້າງ ໃນຂົງເຂດກິດຈະການເຄຫາສະຖານ ແລະ ອາຄານຮັບໃຊ້ກິດຈະການ ການຜະລິດຕ່າງໆ ຊຶ່ງຫົວໜ່ວຍທຸລະກິດໃນດ້ານນີ້ ເອີ້ນໂດຍທົ່ວໄປວ່າ: “ບໍລິສັດ ສຳຫຼວດ-ອອກແບບ ເຄຫາສະຖານ” ແລະ ຕໍ່ໄປຈະຂຽນ

ຫຍໍ້ຢູ່ໃນຂໍ້ກຳນົດສະບັບນີ້ວ່າ “ ບສຄ ”.

**ມາດຕາ 3: ການດຳເນີນທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ**

1. ວິສະຫະກິດສ່ວນບຸກຄົນ ຫຼື ບໍລິສັດໃດໜຶ່ງ ຈະສາມາດສ້າງຕັ້ງ ແລະ ດຳເນີນທຸລະກິດສຳຫຼວດ-ອອກແບບ ເຄຫາສະຖານໄດ້ ກໍຕໍ່ເມື່ອ ໄດ້ຮັບການອະນຸຍາດ ຢ່າງຖືກຕ້ອງຕາມລະບຽບຫຼັກການ ຈາກພະແນກຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ບ່ອນທີ່ສຳນັກງານ ຂອງຕົນຕັ້ງຢູ່.
2. ທຸກພາກສ່ວນທີ່ບໍ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດສຳຫຼວດ-ອອກແບບ ເຄຫາສະຖານ ຖືກຕ້ອງຕາມລະບຽບ ຫຼັກການ ແມ່ນບໍ່ມີສິດທຳການເຄື່ອນໄຫວທຸລະກິດດັ່ງກ່າວໂດຍເດັດຂາດ ແລະ ພ້ອມກັນນັ້ນ ກໍຫ້າມບັນດາການຈັດຕັ້ງຕ່າງໆ ທັງຂອງລັດ ແລະ ເອກະຊົນ, ລວມທັງບຸກຄົນທົ່ວໄປຈ້າງ ຫຼື ຮັບເອົາພາກສ່ວນ ທີ່ບໍ່ມີໃບອະນຸຍາດ ເຂົ້າສຳຫຼວດ-ອອກແບບ, ຄຸ້ມຄອງ ແລະ ກວດກາ ການກໍ່ ສ້າງ ໂຄງການຂອງຕົນ.

**ມາດຕາ 4: ປະເພດ “ ບສຄ ”**

1. “ບສຄ” ມີ 3 ປະເພດ ຄື: ບໍລິສັດ ສຳຫຼວດ-ວິໄຈດິນ ແລະ ວັດສະດຸກໍ່ສ້າງ, ບໍລິສັດ ອອກແບບ-ຕົບແຕ່ງ ເຄຫາສະຖານ ແລະ ບໍລິສັດ ທີ່ປຶກສາ ການກໍ່ສ້າງເຄຫາສະຖານ. ການຈັດປະເພດດັ່ງກ່າວ ແມ່ນອີງຕາມ ຕົ້ນທຶນຈົດທະບຽນຕ່ຳສຸດ ແລະ ຄວາມສາມາດ ທາງດ້ານເຕັກນິກ-ວິຊາການຕົວຈິງ ແລະ ຈະຂຽນບອກແຈ້ງ ຢູ່ໃນໃບອະນຸຍາດດຳເນີນທຸລະກິດຂອງຕົນ.
2. “ບສຄ” ແຕ່ລະປະເພດ ແມ່ນສາມາດເຄື່ອນໄຫວທຸລະກິດໄດ້ໃນຂອບເຂດທົ່ວປະເທດ ແຕ່ມີຂອບເຂດໜ້າວຽກ ທີ່ອະນຸຍາດໃຫ້ເຄື່ອນໄຫວ ດັ່ງນີ້:

- ບໍລິສັດ ສຳຫຼວດ-ວິໄຈດິນ ແລະ ວັດສະດຸກໍ່ສ້າງ ແມ່ນອະນຸຍາດສະເພາະແຕ່ ວຽກສຳຫຼວດພື້ນທີ່ , ສຳຫຼວດວິໄຈດິນ ແຫຼ່ງວັດສະດຸ, ທົດລອງ, ກວດສອບ ແລະ ອອກໃບຢັ້ງຢືນ ຄຸນສົມບັດຕ່າງໆຂອງດິນ ແລະ ວັດສະດຸກໍ່ສ້າງ.
- ບໍລິສັດ ອອກແບບ-ຕົບແຕ່ງ ເຄຫາສະຖານ ອະນຸຍາດສະເພາະແຕ່ ວຽກສຳຫຼວດພື້ນທີ່, ອອກແບບສະຖາປັດຕິຍະກຳ, ອອກແບບ-ຄິດໄລ່ໂຄງສ້າງ, ອອກແບບຕົບແຕ່ງ ພາຍໃນ-ພາຍນອກ ປະເມີນລາຄາ ແລະ ຕິດຕາມການກໍ່ສ້າງ.
- ບໍລິສັດ ທີ່ປຶກສາ ການກໍ່ສ້າງເຄຫາສະຖານ ອະນຸຍາດສະເພາະແຕ່ ວຽກບໍລິການ ດ້ານການສຶກສາໂຄງການ, ການົດລາຍການ ພ້ອມທັງ ມາດຕະຖານເຕັກນິກ ໃນການອອກແບບ ແລະ ກໍ່ສ້າງ , ຊ່ວຍປະກອບ ເອກະສານປະມູນ, ເຮັດສັນຍາ, ຄຸ້ມຄອງການກໍ່ສ້າງ (ຊີ້ນຳ ແລະ ຕິດຕາມການກໍ່ສ້າງ ), ກວດກາ ແລະ ອອກໃບຢັ້ງຢືນ ຄຸນນະພາບໂຄງສ້າງ ແລະ ສ່ວນປະກອບອື່ນໆ ຂອງອາຄານ.

## ໝວດທີ II
## ລະບຽບການອອກອະນຸຍາດ ສ້າງຕັ້ງ ແລະ ດຳເນີນທຸລະກິດ
## ສຳຫຼວດ-ອອກແບບ ເຄຫາສະຖານ

**ມາດຕາ 5: ເງື່ອນໄຂຂອງ "ບສຄ"**

1. **ດ້ານການເງິນ :**

"ບສຄ" ຕ້ອງມີຖານະການເງິນທີ່ໝັ້ນຄົງ ແລະ ພຽງພໍ ສຳລັບການດຳເນີນທຸລະກິດ ຕາມປະເພດຂອງຕົນ, ຕົ້ນທຶນທັງໝົດຈະປະເມີນໄດ້ຈາກມູນຄ່າຊັບສົມບັດຄົງທີ່ ແລະ ທຶນໝູນວຽນ ທີ່ມີຕົວຈິງ ຫຼື ອີງຕາມຜົນການກວດສອບບັນຊີຊັບສິນທັງໝົດຂອງບໍລິສັດ ຊຶ່ງອົງການລັດທີ່ກ່ຽວຂ້ອງ ຫຼື ອົງການກວດ ສອບບັນຊີທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ເປັນຜູ້ຢັ້ງຢືນໃຫ້.

2. **ດ້ານເຕັກນິກ-ວິຊາການ :**

- ຜູ້ຂໍອະນຸຍາດ ກໍຄື ຜູ້ອຳນວຍການບໍລິສັດ ຕ້ອງແມ່ນນັກວິຊາການ ດ້ານການກໍ່ສ້າງເຄຫາຖານ ໃນລະດັບຊັ້ນສູງຂຶ້ນໄປ.
- "ບສຄ"ຕ້ອງມີຄວາມພ້ອມທາງດ້ານບຸກຄະລາກອນຢ່າງຄັກແນ່ ແລະ ໃນນັ້ນຕ້ອງໃຫ້ມີນັກວິຊາການປະຈຳຢ່າງໜ້ອຍ 2 ຄົນ ຊຶ່ງຈົບຊັ້ນສູງ ດ້ານການກໍ່ສ້າງເຄຫາສະຖານ ແລະ ເຄີຍມີປະສົບປະການໃນວຽກງານຕົວຈິງມາແລ້ວ; ນັກວິຊາການດັ່ງກ່າວຕ້ອງ ບໍ່ແມ່ນລັດຖະກອນ, ບໍ່ແມ່ນວິຊາການປະຈຳຂອງບໍລິສັດອື່ນ ແລະ ບໍ່ຖືກສານຕັດສິນຊີ້ຂາດ ໃຫ້ງົດການປະກອບວິຊາຊີບໃນດ້ານນີ້.
- "ບສຄ" ຕ້ອງມີພາຫະນະ, ກົນຈັກ ແລະ ອຸປະກອນ ເພື່ອຮັບໃຊ້ການສຳຫຼວດ-ອອກແບບ, ຄຸ້ມຄອງ ແລະ ກວດກາການກໍ່ສ້າງ ເປັນຂອງຕົນເອງ ຕາມລາຍການ ແລະ ຈຳນວນທີ່ໄດ້ກຳນົດໄວ້ ສຳລັບປະເພດຂອງຕົນ.

3. **ດ້ານກົດໝາຍ :**

- ຕ້ອງໄດ້ໄປຈົດທະບຽນວິສະຫະກິດ ນຳຂະແໜງ ການຄ້າ ແລະ ທ່ອງທ່ຽວ, ມີກົດລະບຽບ ຂອງບໍລິສັດ ແລະ ໃບທະບຽນວິສະຫະກິດ ໃນດ້ານການ ສຳຫຼວດ ແລະ ວິໄຈ ວັດສະດຸກໍ່ສ້າງ ຫຼື ອອກແບບ-ຕົບແຕ່ງ ເຄຫາສະຖານ ຫຼື ທີ່ປຶກສາ ການກໍ່ສ້າງ ເຄຫາສະຖານ. ຖ້າແມ່ນການລົງທຶນ ຂອງຕ່າງປະເທດຕ້ອງມີໃບອະນຸຍາດລົງທຶນ ຢູ່ ສປປ ລາວ ຕື່ມອີກ.
- ບໍລິສັດ ຫຼື ບຸກຄົນ ຜູ້ຂໍອະນຸຍາດ ຕ້ອງບໍ່ມີຊື່ຢູ່ໃນບັນຊີ ທີ່ສານ ຫຼື ອົງການຂອງລັດໃດໜຶ່ງ ສັ່ງງົດ ຫຼື ສັ່ງພັກການເຄື່ອນໄຫວທຸລະກິດ.
- ພາຍຫຼັງທີ່ ສະມາຄົມ ສະຖາປານິກ ແລະ ວິສະວະກອນກໍ່ສ້າງ ຂອງ ສປປ ລາວ. ໄດ້ຮັບການສ້າງຕັ້ງ ແລະ ໄດ້ເຄື່ອນໄຫວຢ່າງເປັນທາງການແລ້ວ, ຜູ້ອຳນວຍການ ແລະ ນັກວິຊາການ ຕ້ອງເປັນສະມາຊິກ ຂອງສະມາຄົມດັ່ງກ່າວ.

4. **ເງື່ອນໄຂອື່ນໆ :**

"ບສຄ" ຕ້ອງມີສໍານັກງານຖາວອນຂອງຕົນເອງ ຢ່າງຄັກແນ່, ມີການຕິດຕັ້ງປ້າຍບອກຊື່ ວິສະຫະກິດ (ເປັນວິສະຫະກິດສ່ວນບຸກຄົນ ຫຼື ບໍລິສັດ ), ເລກທະບຽນ ແລະ ເລກໂທລະສັບ ຢ່າງຄົບຖ້ວນ. ໃນກໍລະນີ ມີການຍົກຍ້າຍສະຖານທີ່ຕ້ອງແຈ້ງທີ່ຢູ່ໃໝ່ ໃຫ້ອົງການລັດທີ່ຄຸ້ມຄອງຕົນຮັບຊາບ.

ເງື່ອນໄຂລະອຽດ ທາງດ້ານການເງິນ, ເຕັກນິກວິຊາການ ແລະ ເຄື່ອງຮັບໃຊ້ສໍານັກງານ ຕ່າງໆ ສໍາລັບ "ບສຄ" ແຕ່ລະປະເພດ ແມ່ນໃຫ້ເບິ່ງຕາມເອະສານຊ້ອນທ້າຍ 1.

**ມາດຕາ 6: ການຂໍອະນຸຍາດ**

1. ວິສະຫະກິດສ່ວນບຸກຄົນ ຫຼື ບໍລິສັດໃດ ທີ່ເຫັນວ່າຕົນມີເງື່ອນໄຂຄົບຖ້ວນ ຕາມ ມາດຕາ 5 ຂ້າງເທິງນັ້ນຫາກມີຈຸດປະສົງ ຢາກຂໍອະນຸຍາດ ດໍາເນີນທຸລະກິດ ສໍາຫຼວດ-ອອກແບບ ເຄຫາສະຖານປະເພດໃດໜຶ່ງ ຫຼື ທັງໝົດ ຕ້ອງໄດ້ປະກອບຄໍາຮ້ອງ ຍື່ນຕໍ່ ພະແນກ ຄຂປກ ປະຈໍາ ທ້ອງຖິ່ນຂອງຕົນ ເພື່ອຄົ້ນຄວ້າພິຈາລະນາ ຕາມລະບຽບຫຼັກການ. ( ຖ້າສ້າງຕັ້ງເປັນ ບໍລິສັດ ທີ່ປຶກສາການກໍ່ສ້າງເຄຫາສະຖານ ແມ່ນສາມາດ ຂໍອະນຸຍາດດໍາເນີນທຸລະກິດເພີ້ມ ໃນປະເພດ 1 ຫຼື 2 ຫຼື ທັງໝົດກໍໄດ້, ກົງກັນຂ້າມຖ້າສ້າງຕັ້ງເປັນ ບໍລິສັດ ສໍາຫຼວດ-ອອກແບບ ປະເພດ 1 ຫຼື 2 ແມ່ນບໍ່ສາມາດຂໍອະນຸຍາດດໍາເນີນທຸລະກິດເພີ້ມໃນປະເພດ 3 ໄດ້ ).
2. ການປະກອບສານວນເອກະສານ ຕ້ອງໃຫ້ຖືກຕ້ອງ ຕາມແບບຟອມ ທີ່ທາງການໄດ້ອະນຸມັດ ແລະ ຖືກຕ້ອງກັບຄວາມຈິງ (ລາຍການເອກະສານ ແລະ ແບບຟອມລະອຽດ ແມ່ນໃຫ້ເບິ່ງຕາມເອກະສານຊ້ອນທ້າຍ 2).
3. ຜູ້ຂໍອະນຸຍາດຕ້ອງຮັບຜິດຊອບ ຕໍ່ຄວາມຖືກຕ້ອງຂອງບັນດາຂໍ້ມູນ ຫຼື ເອກະສານຕ່າງໆ ທີ່ຕົນໄດ້ແຈ້ງຕໍ່ໜ້າກົດໝາຍ.

**ມາດຕາ 7: ການອອກໃບອະນຸຍາດ**

1. ຫຼັງຈາກທີ່ ໄດ້ຮັບຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດແລ້ວ ພະແນກ ຄຂປກ ກ່ຽວຂ້ອງຈະຄົ້ນຄວ້າພິຈາລະນາ ແລະ ໃຫ້ຄໍາຕອບແກ່ຜູ້ຮ້ອງຂໍ ເປັນລາຍລັກອັກສອນ ພາຍໃນກໍານົດເວລາບໍ່ເກີນ 30 ວັນ. ຫາກເຫັນວ່າ ຜູ້ຮ້ອງຂໍມີຄຸນສົມບັດ ຫຼື ມີເງື່ອນໄຂພຽງພໍ ຕາມ ມາດຕາ 5 ກໍຈະອອກໃບອະນຸຍາດດໍາເນີນທຸລະກິດໃຫ້ ເປັນທາງການ.
2. ຜູ້ທີ່ໄດ້ຮັບອະນຸຍາດ ດໍາເນີນທຸລະກິດ ສໍາຫຼວດ-ອອກແບບ ເຄຫາສະຖານ ຈະຕ້ອງໄດ້ຈ່າຍຄ່າທໍານຽມໃນການອອກໃບອະນຸຍາດໃນແຕ່ລະຄັ້ງ ຕາມອັດຕາທີ່ທາງການໄດ້ກໍານົດອອກໃນແຕ່ລະໄລຍະ (ອັດຕາຄ່າທໍານຽມ ສໍາລັບແຕ່ລະປະເພດ "ບສຄ" ໃນເບື້ອງຕົ້ນ ໃຫ້ປະຕິບັດ ຕາມເອກະສານຊ້ອນທ້າຍ 1).

**ມາດຕາ 8: ການນໍາໃຊ້ໃບອະນຸຍາດ**

1. ໃບອະນຸຍາດດໍາເນີນທຸລະກິດ ສໍາຫຼວດ-ອອກແບບ ເຄຫາສະຖານໜຶ່ງໆ ສາມາດນໍາໃຊ້ໄດ້ແຕ່ຜູ້ທີ່

ໄດ້ ຮັບການອະນຸຍາດເທົ່ານັ້ນ, ຫ້າມໂອນ ຫຼື ມອບໃຫ້ຜູ້ອື່ນເອົາໄປນຳໃຊ້ໂດຍເດັດຂາດ.

2. ໃບອະນຸຍາດ ດຳເນີນທຸລະກິດ ທີ່ອອກໃຫ້ແຕ່ລະເທື່ອ ແມ່ນມີອາຍຸການນຳໃຊ້ໄດ້ ພາຍໃນກຳນົດ 12 ເດືອນ ນັບແຕ່ມື້ອອກອະນຸຍາດເປັນຕົ້ນໄປ, ເມື່ອໃກ້ຈະໝົດກຳນົດດັ່ງກ່າວ ຖ້າຫາກຍັງຕ້ອງການຈະສືບຕໍ່ ຈະຕ້ອງຍື່ນຄຳຮ້ອງຂໍສືບຕໍ່ລ່ວງໜ້າ ຢ່າງນ້ອຍ 30 ວັນ; ໃນລະຍະລໍຖ້າຢູ່ນັ້ນ "ບສຄ" ຍັງມີສິດສືບຕໍ່ດຳເນີນທຸລະກິດຕາມປົກກະຕິ ຈົນກວ່າຈະໄດ້ຮັບຄຳຕອບເປັນຄືແນວໃດ ຈຶ່ງປະຕິບັດຕາມນັ້ນ.
3. ໃນກໍລະນີມີຄວາມຈຳເປັນຢາກຢຸດພັກການດຳເນີນທຸລະກິດຊົ່ວຄາວ ແຕ່ບໍ່ເກີນ 1 ອາຍຸການ "ບສຄ" ຕ້ອງໄດ້ສະເໜີຂໍຢຸດພັກເປັນລາຍລັກອັກສອນຄັກແນ່ ໂດຍບອກເຫດຜົນລະອຽດໃຫ້ພະແນກ ຄຂປກ ທີ່ຄຸ້ມຄອງຕົນ ຮັບຊາບ ແລະ ອອກໃບຢັ້ງຢືນໃຫ້ ເພື່ອເປັນຫຼັກຖານ.
4. ໃນກໍລະນີທີ່ຕ້ອງການຢຸດພັກຊົ່ວຄາວ ເກີນກວ່າ 1 ອາຍຸການ ແມ່ນຈະຕ້ອງໄດ້ຮັບຄວາມເຫັນດີຈາກຂະແໜງການຄ້າກ່ອນ ຈຶ່ງສະເໜີຢຸດພັກໄດ້; ບໍ່ດັ່ງນັ້ນ ເມື່ອຈະກັບຄືນມາຂໍອະນຸຍາດສືບຕໍ່ດຳເນີນທຸລະກິດອີກ ຕ້ອງໄດ້ປະກອບຄຳຮ້ອງຜ່ານຂະແໜງການຄ້າຄືນໃໝ່.

## ໝວດທີ III
## ຫຼັກການໃນການດຳເນີນທຸລະກິດ "ບສຄ"

### ມາດຕາ 9: ຂອບເຂດການເຄື່ອນໄຫວທຸລະກິດ

1. ທຸກ "ບສຄ" ເມື່ອໄດ້ຮັບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍແລ້ວ ຕ້ອງເຄື່ອນໄຫວສອດຄ່ອງກັບ ແນວທາງນະໂຍບາຍຂອງພັກ, ລະບຽບ ກົດໝາຍຂອງລັດ ແລະ ພ້ອມດຽວກັນ ກໍຕ້ອງຍອມຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາ ຂອງອົງການລັດທີ່ກ່ຽວຂ້ອງ.
2. ການເຄື່ອນໄຫວທຸລະກິດຂອງ "ບສຄ" ແຕ່ລະປະເພດ ຕ້ອງຢູ່ໃນຂອບເຂດ ຂະແໜງການ ແລະ ເປົ້າໝາຍ ທີ່ຕົນໄດ້ຮັບອະນຸຍາດເທົ່ານັ້ນ. ໃນກໍລະນີໂຄງການ ສຳຫຼວດ-ອອກແບບ ຫຼື ຄຸ້ມຄອງການກໍ່ສ້າງອາຄານໃດໜຶ່ງ ມີໜ້າວຽກຂອງ "ບສຄ" ປະເພດອື່ນ ຫຼື ຂະແໜງການອື່ນປົນຢູ່ນຳ, "ບສຄ" ທີ່ໄດ້ຮັບໂຄງການ ສາມາດຮັບເອົາໜ້າວຽກດັ່ງກ່າວ ເຂົ້າລວມໃນວຽກຮັບເໝົາຂອງຕົນໄດ້ ຖ້າຫາກວ່າມູນຄ່າຂອງໜ້າວຽກເຫຼົ່ານັ້ນ ເມື່ອລວມກັນແລ້ວ ບໍ່ເກີນ 20% ຂອງມູນຄ່າໂຄງການທັງໝົດ.
3. "ບສຄ" ຕ້ອງມີຈັນຍາບັນທາງດ້ານວິຊາຊີບ, ປະຕິບັດວຽກງານດ້ວຍຄວາມຕັ້ງໃຈຈິງ ທີ່ຈະໃຫ້ຜົນງານຂອງຕົນ ເປັນຜົນດີຕໍ່ສັງຄົມ ແລະ ບໍ່ກະທຳການໃດໆ ທີ່ເປັນການທຳລາຍກຽດສັກສີ ແລະ ຊື່ສຽງຂອງຕົນເອງ ແລະ "ບສຄ" ອື່ນ.
4. ຫ້າມເປີດເຜີຍ ຄວາມລັບຂອງໂຄງການ ຫຼື ວຽກງານ ທີ່ຕົນເປັນຜູ້ປະຕິບັດ ຖ້າຫາກບໍ່ໄດ້ຮັບການ

ເຫັນດີຈາກເຈົ້າຂອງໂຄງການ.

5. ຫ້າມ "ບສຄ" ກ່າຍ ຫຼື ນໍາໃຊ້ແບບຂອງຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ, ຫ້າມອອກໃບຢັ້ງຢືນຜົນການວິໄຈ, ທົດລອງ ຫຼື ກວດກາ ແລະ ເຊັນຜ່ານແບບ ຫຼື ແຜນຜັງຕ່າງໆ ຊຶ່ງຕົນບໍ່ໄດ້ເປັນຜູ້ດໍາເນີນການເອງ ໂດຍເດັດຂາດ.

**ມາດຕາ 10: ການເຂົ້າຮ່ວມຮັບເອົາໂຄງການ**

1. ທຸກ "ບສຄ" ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ແມ່ນມີສິດສະໝັກເຂົ້າແຂ່ງຂັນ ໃນການປະມູນ ຫຼື ທາບທາມລາຄາ ເພື່ອຮັບເອົາໂຄງການຕ່າງໆ ຕາມຂອບເຂດການເຄື່ອນໄຫວ ທີ່ໄດ້ຮັບອະນຸຍາດ ສໍາລັບປະເພດຂອງຕົນ.
2. ໃນເວລາເຂົ້າຮ່ວມການປະມູນ ຫຼື ທາບທາມລາຄານັ້ນ ການສະເໜີມູນຄ່າ ໃນການສໍາຫຼວດ-ອອກແບບ ຫຼື ຄຸ້ມຄອງການກໍ່ສ້າງ ຕ້ອງເຮັດດ້ວຍຄວາມສຸດຈະລິດ, ມີເຫດຜົນ ແລະ ຍຸດຕິທໍາ; ຫ້າມສົມຮູ້ຮ່ວມຄິດກັນກໍານົດລາຄາ ຫຼື ກະທໍາການໃດໆ ເພື່ອເອື້ອອໍານວຍໃຫ້ຕົນເອງ ຫຼື "ບສຄ" ໃດໜຶ່ງເປັນຜູ້ຊະນະການປະມູນ ຫຼື ໄດ້ຮັບວຽກ.
3. ເມື່ອໄດ້ຮັບວຽກ ກໍຄືໂຄງການສໍາຫຼວດ-ອອກແບບ ຫຼື ຄຸ້ມຄອງການກໍ່ສ້າງແລ້ວ "ບສຄ" ຕ້ອງເຮັດສັນຍາກັບ ຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການ ເປັນລາຍລັກອັກສອນຄັກແນ່ ແລະ ສັນຍາຕ້ອງໄດ້ຈົດທະບຽນໃຫ້ຖືກຕ້ອງຕາມກົດໝາຍ ແລະ ບໍ່ໃຫ້ຖິ້ມປະວຽກງານ ໂດຍບໍ່ສົມເຫດສົມຜົນ.
4. ຫ້າມຮັບປະຕິບັດວຽກ ຫຼື ໂຄງການ ໂດຍນໍາໃຊ້ແບບ ຫຼື ແຜນຜັງຢ່າງດຽວກັນ ໃຫ້ແກ່ຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການອື່ນອີກ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການເດີມ.
5. ຫ້າມຮັບປະຕິບັດວຽກ ຫຼື ໂຄງການ ອັນດຽວກັນ ໃຫ້ຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການອື່ນ ເພື່ອການປຽບທຽບ, ປະມູນ ຫຼື ແຂ່ງຂັນ ເວັ້ນເສຍແຕ່ໄດ້ແຈ້ງໃຫ້ ຜູ້ທີ່ວ່າຈ້າງ ຫຼື ເຈົ້າຂອງໂຄງການເດີມ ຊາບລ່ວງໜ້າເປັນລາຍລັກອັກສອນ ຫຼື ໄດ້ມີການຍິນຍອມເປັນລາຍລັກອັກສອນຈາກຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການເດີມ.
6. ຫ້າມຮັບເອົາວຽກ ຫຼື ໂຄງການດຽວກັນ ກັບ "ບສຄ" ອື່ນ ຫຼື ຮັບຊ່ວງວຽກຕໍ່ຈາກ "ບສຄ" ອື່ນ ທີ່ມີສັນຍາແລ້ວ ເວັ້ນເສຍແຕ່ເປັນການຮັບຕາມຈຸດປະສົງ ຂອງຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການ ໂດຍໄດ້ແຈ້ງໃຫ້ "ບສຄ" ກ່ອນນັ້ນ ຊາບລ່ວງໜ້າ ແລະ ໄດ້ຮັບການຍິນຍອມເປັນລາຍລັກອັກສອນແລ້ວ ຫຼື ຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການ ມີຫຼັກຖານເປັນລາຍລັກອັກສອນວ່າ ໄດ້ຍົກເລີກສັນຍາເດີມ ຫຼື ສັນຍາເດີມເປັນໂມຄະແລ້ວ.

**ມາດຕາ 11: ການປະຕິບັດພັນທະ**

1. ຫຼັງຈາກໄດ້ເຊັນສັນຍາກັບຜູ້ວ່າຈ້າງ ຫຼື ເຈົ້າຂອງໂຄງການແລ້ວ "ບສຄ" ຕ້ອງມີຄວາມຮັບຜິດຊອບຕໍ່ການປະຕິບັດພັນທະຂອງຕົນຕາມສັນຍາຢ່າງເຄັ່ງຄັດ; ໜ້າວຽກ ສໍາຫຼວດ-ອອກແບບ ຫຼື

ຄຸ້ມຄອງການກໍ່ສ້າງ ຕ້ອງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ໃຫ້ສອດຄ່ອງກັບຈຸດປະສົງພື້ນຖານຂອງໂຄງການ ທີ່ກຳນົດໄວ້.

2. ທຸກ "ບສຄ" ຕ້ອງໄປຊຳລະ ອາກອນຕົວເລກທຸລະກິດ, ອາກອນກຳໄລ ແລະ ອາກອນແຮງງານ-ເງິນເດືອນໃຫ້ລັດ ຢ່າງຄົບຖ້ວນ ແລະ ທ່ວງທັນຕາມກຳນົດເວລາ. ໃນແຕ່ລະເທື່ອທີ່ມາຂໍສືບຕໍ່ດຳເນີນທຸລະກິດ ຕ້ອງໄດ້ແຈ້ງໃບຢັ້ງຢືນການຊຳລະອາກອນປະຈຳປີຜ່ານມາ ໃຫ້ອົງການລັດທີ່ຄຸ້ມຄອງຕົນຮັບຊາບ.
3. ທຸກ "ບສຄ" ມີໜ້າທີ່ປະກອບສ່ວນສົ່ງເສີມ ການພັດທະນາວຽກງານເຄຫາສະຖານ ແລະ ການກໍ່ສ້າງບຸກຄະລາກອນໃນດ້ານດັ່ງກ່າວ ເປັນຕົ້ນແມ່ນ ໃຫ້ການຊ່ວຍເຫຼືອດ້ານທຶນຮອນ, ອຳນວຍຄວາມສະດວກ ໃຫ້ແກ່ການມາທັດສະນະສຶກສາຢູ່ສະຖານທີ່ກໍ່ສ້າງ ຫຼື ຮັບນັກສຶກສາເຂົ້າຝຶກງານໂດຍຈ່າຍຄ່າແຮງງານໃຫ້ ຢ່າງສົມເຫດສົມຜົນ (ສຳລັບ ບໍລິສັດທີ່ມີໂຄງການ ສຳຫຼວດ-ອອກແບບ ຫຼື ການກໍ່ສ້າງ).
4. ທຸກ "ບສຄ" ຕ້ອງປະຕິບັດຕາມລະບອບບັນຊີແຫ່ງລັດ ແລະ ລະບອບລາຍງານ ກ່ຽວກັບການດຳເນີນ ຢ່າງເຂັ້ມງວດ; ສະຫລຸບ ດ້ານວຽກງານສຳຫຼວດ-ອອກ ແບບ ແລະ ຄຸ້ມຄອງການກໍ່ສ້າງ, ຖານະການເງິນ ແລະ ການນຳໃຊ້ແຮງງານ ສົ່ງໃຫ້ພະແນກ ຄຂປກ ທີ່ຄຸ້ມຄອງຕົນ ຢ່າງນ້ອຍປີໜຶ່ງ 2 ເທື່ອ ( ທ້າຍ ເດືອນ 6 ແລະ ເດືອນ 12).

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ທີ່ລະເມີດ

### ມາດຕາ 12: ນະໂຍບາຍຕໍ່ຜູ້ມີຜົນງານ

1. "ບສຄ" ໃດ ດຳເນີນທຸລະກິດຢ່າງມີຄຸນນະພາບ ແລະ ສອດຄ່ອງຕາມລະບຽບກົດໝາຍ, ພ້ອມທັງໄດ້ປະກອບສ່ວນເຂົ້າ ໃນການພັດທະນເສດຖະກິດ-ສັງຄົມ ແຫ່ງຊາດ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ ຮັບສິດ ແລະ ຜົນປະໂຫຍດຕ່າງໆ ຕາມທີ່ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການສົ່ງເສີມ ການລົງທຶນ ພາຍໃນ ແລະ ຄຸ້ມຄອງການລົງທຶນ ຂອງຕ່າງປະເທດ ຢູ່ ສປປ ລາວ.
2. ຜູ້ທີ່ພົບເຫັນ "ບສຄ" ຫຼື ບຸກຄົນໃດໜຶ່ງ ໄດ້ລະເມີດ ຕໍ່ຂໍ້ກຳນົດສະບັບນີ້ ແລ້ວລາຍງານ ໂດຍມີມູນ ຄວາມຈິງ ແມ່ນຈະໄດ້ຮັບ ການຊົມເຊີຍ ພ້ອມທັງຄ່າບຳເນັດ ເທົ່າກັບ 10% ຂອງຄ່າປັບໄໝ ໃນແຕ່ລະກໍລະນີ ຂອງການລະເມີດ.

### ມາດຕາ 13: ມາດຕະການ ສຶກສາອົບຮົມ ແລະ ປັບໄໝ

1. ທຸກພາກສ່ວນ ທີ່ທຳການເຄືອນໄຫວ ສຳຫຼວດ-ອອກແບບເຄຫາສະຖານ ປະເພດໃດໜຶ່ງ ໂດຍບໍ່ມີໃບອະນຸຍາດດຳເນີນທຸລະກິດ ຢ່າງຖືກຕ້ອງ ( ລວມທັງ ການນຳໃຊ້ໃບອະນຸຍາດຂອງຜູ້ອື່ນ ) ແມ່ນຈະຖືກສຶກສາອົບຮົມ ແລະ ປັບໄໝ ເທົ່າກັບ 5% ຂອງມູນຄ່າໂຄງການ ຫຼື ໜ້າວຽກ ທີ່ຕົນ

ໄດ້ຮັບປະຕິບັດ, ພ້ອມກັນນັ້ນ ກໍຍັງຈະຖືກສັ່ງໃຫ້ຢຸດເຊົາ ການເຄື່ອນໄຫວດັ່ງກ່າວ; ການສັ່ງໃຫ້ຢຸດເຊົາ ຈະບໍ່ເປັນເຫດໃຫ້ພົ້ນຈາກ ຄວາມຮັບຜິດຊອບຕາມສັນຍາ ( ຈະຕ້ອງໄດ້ໄກ່ເກ່ຍ ແລະ ສະສາງບັນຫາຕ່າງໆ ຕາມທີ່ລະບຸໄວໃນສັນຍາ).

2. "ບສຄ" ໃດ ທີ່ເອົາໃບອະນຸຍາດ ດຳເນີນທຸລະກິດຂອງຕົນ ໄປໃຫ້ຜູ້ອື່ນເຊົ່າ ຫຼື ນຳໃຊ້ ເພື່ອທຳການເຄື່ອນໄຫວຮັບວຽກ ສຳຫຼວດ-ອອກແບບ ແລະ ຄຸ້ມຄອງການກໍ່ສ້າງ ເຄຫາສະຖານ ແມ່ນຈະຖືກສຶກ ສາອົບຮົມ ແລະ ປັບໄໝ 10 ເທົ່າ ຂອງຄ່າທຳນຽມອອກອະນຸຍາດ.
3. "ບສຄ" ໃດ ຍັງສືບຕໍ່ ທຳການເຄື່ອນໄຫວ ສຳຫຼວດ-ອອກແບບ ແລະ ຄຸ້ມຄອງການກໍ່ສ້າງ ເຄຫາສະຖານ ໃນລະຫວ່າງທີ່ໃບອະນຸຍາດຂອງຕົນໝົດອາຍຸແລ້ວ, ຖ້າບໍ່ເກີນ 3 ເດືອນ ແມ່ນຈະຖືກຕັກເຕືອນ ແລະ ແນະນຳ ໃຫ້ໄປຂໍອະນຸຍາດສືບຕໍ່ດຳເນີນທຸລະກິດ ໃຫ້ຖືກຕ້ອງ, ແຕ່ຖ້າຫາກເກີນກຳນົດ ດັ່ງກ່າວ ແມ່ນຈະຖືກ ສຶກສາອົບຮົມ ແລະ ປັບໄໝ ຕາມຂໍ້ 1 ຂອງມາດຕານີ້.
4. "ບສຄ" ໃດ ທີ່ມາຂໍຕໍ່ໃບອະນຸຍາດດຳເນີນທຸລະກິດຊັກຊ້າ ຖ້າບໍ່ເກີນ 3 ເດືອນ ແມ່ນຈະຖືກຕັກເຕືອນ ແລະ ປັບໄໝ 1 ເທົ່າ ຂອງຄ່າທຳນຽມອອກໃບອະນຸຍາດ, ແຕ່ຖ້າຫາກ ເກີນກຳນົດດັ່ງກ່າວ ການປັບໄໝຈະເພີ່ມຂຶ້ນ ເປັນ 3 ເທົ່າຂອງຄ່າທານຽມອອກໃບອະນຸຍາດ.
5. "ບສຄ" ໃດ ໄດ້ແຈ້ງຂໍ້ມູນເທັດ ຫຼື ທຳການ ປອມແປງເອກະສານ ໃນເວລາປະກອບຄຳຮ້ອງຂໍອະນຸຍາດ ສືບຕໍ່ດຳເນີນທຸລະກິດ ຫຼື ລະເມີດ ມາດຕາ 9, 10, 11, ແລະ 12 ຂອງຂໍ້ກຳນົດສະບັບນີ້ ນອກຈາກຈະໄດ້ຮັບໂທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງແລ້ວ ກໍຍັງຈະຖືກປັບໄໝຕື່ມອີກ 10 ເທົ່າ ຂອງຄ່າທານຽມອອກໃບອະນຸຍາດ.
6. "ບສຄ" ໃດ ໄດ້ຢຸດພັກການດຳເນີນທຸລະກິດ ໂດຍພະລະການ ( ບໍ່ມີໃບຢັ້ງຢືນເປັນລາຍລັກອັກສອນ) ແຕ່ບໍ່ເກີນ 1 ອາຍຸການ, ເມື່ອກັບຄືນມາຂໍສືບຕໍ່ດຳເນີນທຸລະກິດອີກ ກໍຈະຖືກໄລ່ລຽງໃຫ້ເສຍອາກອນຍ້ອນຫຼັງ ແລະ ຖືກປັບໄໝເທົ່າກັບ 3 ເທົ່າ ຂອງຄ່າທຳນຽມອອກໃບອະນຸຍາດ.

**ມາດຕາ 14: ການງົດການດຳເນີນທຸລະກິດ**

ພະແນກ ຄຂປກ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີສິດງົດການດຳເນີນທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ ຂອງ "ບສຄ" ໃດໜຶ່ງ ຊຶ່ງຂຶ້ນກັບການຄຸ້ມຄອງຂອງຕົນ ເມື່ອເຫັນວ່າ "ບສຄ" ດັ່ງກ່າວ ມີການລະເມີດຂໍ້ກຳນົດສະບັບນີ້ ຢ່າງລຽນຕິດ, ເຄີຍຖືກສຶກສາອົບຮົມ ປັບໄໝແລ້ວ ແຕ່ບໍ່ຍອມປ່ຽນແປງ.

**ມາດຕາ 15: ການຖອນໃບອະນຸຍາດ**

1. ພະແນກ ຄຂປກ ປະຈຳ ແຂວງ ກຳແພງນະຄອນ ແລະ ເຂດພິເສດ ມີສິດຖອນໃບອະນຸຍາດດຳເນີນ ທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ ຂອງ "ບສຄ" ໃດໜຶ່ງ ຊຶ່ງຂຶ້ນກັບການຄຸ້ມຄອງຂອງຕົນ ເມື່ອເຫັນວ່າ :
   - ມີການຮ້ອງຂໍຢຸດເຊົາການດຳເນີນທຸລະກິດ ຍ້ອນເຫດຜົນສ່ວນຕົວ ຫຼື ເຈົ້າຂອງເສຍຊີວິດ.

- ຢຸດພັກການດຳເນີນທຸລະກິດໂດຍພະລະການ ເກີນກວ່າ 1 ອາຍຸການ.
- ຖືກສັ່ງ ໃຫ້ຖອນໃບອະນຸຍາດດຳເນີນທຸລະກິດ ຍ້ອນໄດ້ລະເມີດລະບຽບກົດໝາຍຕ່າງໆ ຂອງລັດຢ່າງຮ້າຍແຮງ ຫຼື ມີການເຄື່ອນໄຫວ ທີ່ຂັດຕໍ່ແນວທາງນະໂຍບາຍຂອງພັກ.

2. ກ່ອນຈະຖອນໃບອະນຸຍາດດຳເນີນທຸລະກິດ ຂອງ "ບສຄ" ໃດໜຶ່ງ ຕ້ອງໄດ້ມີການຄົ້ນຄວ້າ ຢ່າງກົງໄປ ກົງມາ ແລະ ສົມເຫດສົມຜົນຄັກແນ່ ແລະ ເມື່ອໄດ້ຖອນແລ້ວ ກໍຕ້ອງໄດ້ແຈ້ງໃຫ້ຂະແໜງການຄ້າ ຮັບຊາບ ແລະ ຖອນໃບທະບຽນວິສະຫະກິດ ຂອງ "ບສຄ" ດັ່ງກ່າວ.
3. ຜູ້ທີ່ໄດ້ຖືກຖອນໃບອະນຸຍາດດຳເນີນທຸລະກິດ ອາດຈະກັບມາຂໍອະນຸຍາດຄືນໃໝ່ໄດ້ ເມື່ອພົ້ນກຳນົດ 3 ໄປແລ້ວ.

## ໝວດທີ V
## ຂໍ້ກຳນົດສຸດທ້າຍ

**ມາດຕາ 16: ການຈັດຕັ້ງປະຕິບັດ**

1. ມອບໃຫ້ ກົມເຄຫາຜັງເມືອງ ວາງລະບຽບການ, ຫຼັກການ ທາງດ້ານເຕັກນິກ ເພື່ອເປັນມາດຕະຖານໃນການຈັດຕັ້ງຄຸ້ມຄອງບັນດາຫົວໜ່ວຍທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ ໃຫ້ເປັນເອກະພາບ ຢູ່ໃນຂອບເຂດທົ່ວປະເທດ ແລະ ລົງຕິດຕາມຊຸກຍູ້ ແລະ ກວດກາ ການຈັດຕັ້ງຄຸ້ມຄອງທຸລະກິດ ດັ່ງກ່າວ ໃຫ້ເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍ ແລະ ມີປະສິດທິຜົນ.
2. ມອບໃຫ້ພະແນກ ຄຂປກ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ປະສານສົມທົບກັບບັນດາ ຂະແໜງການຕ່າງໆທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ໃຫ້ໄດ້ຮັບຜົນດີ ແລະ ເອົາໃຈໃສ່ລົງ ກວດກາການເຄື່ອນໄຫວຕົວຈິງ ຂອງ "ບສຄ" ຢ່າງເຂັ້ມງວດ.
3. ສຳລັບ "ບສຄ" ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ສຳຫຼວດ-ອອກແບບ ເຄຫາສະຖານ ກ່ອນການປະກາດໃຊ້ຂໍ້ກຳນົດສະບັບນີ້ ແມ່ນອະນຸຍາດໃຫ້ສືບຕໍ່ເຄື່ອນໄຫວໄປຈົນກວ່າໃບອະນຸຍາດຈະໝົດກຳນົດ. ເມື່ອຈະມາຂໍສືບຕໍ່ດຳເນີນທຸລະກິດ ໃນສົກຕໍ່ໄປ ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດສະບັບໃໝນີ້.

**ມາດຕາ 17: ຜົນສັກສິດ**

ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນຳໃຊ້ໄດ້ ນັບແຕ່ມືລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງໃໝ່. ທຸກຂໍ້ກຳນົດ, ກົດລະບຽບ ແລະ ຂໍ້ຕົກລົງຕ່າງໆ ຂອງກະຊວງ ແລະ ພະແນກ ຄຂປກ ທີ່ບໍ່ສອດຄ່ອງ ກັບເນື້ອໃນຂອງຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ວຽງຈັນ, ວັນທີ 24 MAY 2002

ລັດຖະມົນຕີວ່າການ

Appendix 1

# ເງື່ອນໄຂລະອຽດດ້ານການເງິນ ແລະ ເຕັກນິກ-ວິຊາການ ຂອງ " ບສດ "

| ລ/ດ | ລາຍການ | ຫົວໜ່ວຍ | ສຳຫລວດ ວິໃຈ | ສຳຫລວດ ອອກແບບ | ທີ່ປຶກສາ ການກໍ່ສ້າງ | ໝາຍເຫດ |
|---|---|---|---|---|---|---|
| I | [redacted] | | | | | |
| 1 | ຕົ້ນທຶນຈົດທະບຽນ ຕ່ຳສຸດ | ກີບ | 200 ລ້ານ | 50 ລ້ານ | 100 ລ້ານ | |
| 2 | ຄ່າທຳນຽມ ອອກໃບອະນຸຍາດ | ກີບ | 100.000 | 100.000 | 100.000 | |
| II | [redacted] | | [illegible] | | | |
| ! | ຈຳນວນພົນລວມຕ່ຳສຸດ ຂອງບໍລິສັດ | ຄົນ | 10 | 5 | 7 | |
| 2 | ຈຳນວນນັກວິຊາການຊັ້ນສູງ | ຄົນ | 2 | 2 | 2 | ອອກແບບ ຕ້ອງມີສະຖາປານິກ |
| 3 | ຈຳນວນພະນັກງານ ຫລື ວິຊາການອື່ນໆ | ຄົນ | 8 | 3 | 5 | |
| 4 | ປະສົບປະການ ຂອງນັກວິຊາການຊັ້ນສູງ | ປີ | 5 | 5 | 10 | ຢ່າງນ້ອຍ |
| III | [redacted] | [illegible] | | | | |
| 1 | ລົດເກັ໋ງ ຫລື ລົດກະບະ ບໍລິຫານວຽກ | ຄັນ | 1 | 1 | 1 | |
| 2 | ລົດສຳຫລວດ ວິໃຈດິນ | ຄັນ | 1 | | | |
| 3 | ກ້ອງລະດັບ | ໜ່ວຍ | 1 | 1 | | |
| 4 | ກ້ອງມູມ | ໜ່ວຍ | 1 | 1 | | |
| 5 | ເຄື່ອງທົດລອງດິນ | ຊຸດ | 1 | | | |
| 6 | ເຄື່ອງທົດລອງເບຕົງ | ຊຸດ | 1 | | | |
| 7 | ເຄື່ອງທົດລອງຊີມັງ | ຊຸດ | 1 | | | |
| 8 | ເຄື່ອງທົດລອງເຫລັກ / ວັດສະດຸ ອື່ນໆ | ຊຸດ | 1 | | | |
| 9 | ເຄື່ອງກວດກາຄຸນນະພາບຂອງເບຕົງ | ຊຸດ | 1 | | 1 | |
| 10 | ເຄື່ອງຄອມພິວເຕີ ອອກແບບ-ຄິດໄລ່ ໄດ້ | ເຄື່ອງ | 1 | 1 | 2 | |
| 11 | ເຄື່ອງພິມ ແຜນຜັງ | ເຄື່ອງ | 1 | 1 | 1 | ຢ່າງຕ່ຳພິມເຈ້ຍ A3 ໄດ້ |
| | | | | | | |
| IV | [redacted] | | [illegible] | | | ຢ່າງນ້ອຍຕ້ອງມີ |
| 1 | ຊາລົງຮັບແຂກ | ຊຸດ | 1 | 1 | 1 | |
| 2 | ພິມດີດ ຫລື ເຄື່ອງຄອມພິວເຕີ+ເຄື່ອງພິມ | ຊຸດ | 1 | 1 | 1 | |
| 3 | ໂຕະ-ຕັ່ງ ສຳລັບຫ້ອງການ/ແຕ້ມແບບ | ຊຸດ | 3 | 3 | 3 | |
| 4 | ໂຕະ-ຕັ່ງ ສຳລັບການປະຊຸມ | ຊຸດ | 1 | 1 | 1 | |
| 5 | ໂທລະສັບ | ໜ່ວຍ | 1 | 1 | 1 | ຍົກເວັ້ນເມືອງທີ່ຍັງບໍ່ມີໂທລະສັບ |